ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ລັດຖະບານ | ເລກທີ 60 /ລບ

ນະຄອນຫຼວງວຽງຈັນ, ວັນທີ 5.2.2014

# ດຳລັດ
# ວ່າດ້ວຍຄື້ນຄວາມຖີ່

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບປັບປຸງ ເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ ສະບັບປັບປຸງ ເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມໜັງສືສະເໜີ ຂອງລັດຖະມົນຕີວ່າການ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 2068/ປທສ, ລົງວັນທີ 09/12/2013.

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ, ກວດກາ ການຈັດຕັ້ງ ແລະ ການເຄື່ອນໄຫວນຳໃຊ້ຄື້ນຄວາມຖີ່ ເພື່ອໃຫ້ມີປະສິດທິພາບ, ປະສິດທິຜົນ, ມີຄວາມສະດວກ, ວ່ອງໄວ, ທັນສະໄໝ ແລະ ຍຸຕິທຳ ແນໃສ່ຮັບປະກັນຄວາມໝັ້ນຄົງ, ຄວາມປອດໄພຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 ຄື້ນຄວາມຖີ່**

ຄື້ນຄວາມຖີ່ ແມ່ນຄື້ນແມ່ເຫຼັກໄຟຟ້າທີ່ກະຈາຍໃນອາກາດ ແລະ ອາວະກາດ ຊຶ່ງມີຍ່ານຄວາມຖີ່ແຕ່ ສາມ ກິໂລເຮີດ ເຖິງ ສາມຮ້ອຍ ຈີກາເຮີດ ທີ່ນຳໃຊ້ເຂົ້າໃນການໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ເຮີດ (Hz–Hertz ) ໝາຍເຖິງ ຫົວໜ່ວຍວັດແທກ ຄື້ນຄວາມຖີ່ ໂດຍວັດແທກຕາມໜຶ່ງຮອບຄື້ນຄວາມຖີ່ ຕໍ່ໜຶ່ງວິນາທີ;
2. ການສື່ສານ ໝາຍເຖິງ ການຮັບ ຫຼື ສົ່ງ ແລະ ທັງຮັບ ທັງສົ່ງ ຂໍ້ມູນ ໂດຍການນຳໃຊ້ຄື້ນຄວາມຖີ່;
3. ສະຖານີວິທະຍຸ ໝາຍເຖິງ ສະຖານທີ່ ທີ່ມີການຕິດຕັ້ງອຸປະກອນຮັບ-ສົ່ງ ແລະ ທັງຮັບ ທັງສົ່ງ ຄື້ນຄວາມຖີ່ ຊຶ່ງລວມມີສະຖານີ ຄົງທີ່ ແລະ ເຄື່ອນທີ່;
4. ແຜນຜັງຄື້ນຄວາມຖີ່ແຫ່ງຊາດ ໝາຍເຖິງ ແຜນຜັງການຈັດສັນຄື້ນຄວາມຖີ່ເປັນຍ່ານ ແລະ ເປັນແຖບ ທີ່ມີການກຳນົດການນຳໃຊ້;
5. ຍ່ານຄວາມຖີ່ ໝາຍເຖິງ ຄື້ນຄວາມຖີ່ ຊຶ່ງກຳນົດຂອບເຂດສະເພາະ ທີ່ມີຫຼາຍແຖບ ຄວາມຖີ່;
6. ແຖບຄວາມຖີ່ ໝາຍເຖິງ ຄວາມຖີ່ຊຶ່ງມີຈຸດເລີ່ມຕົ້ນ ແລະ ຈຸດສິ້ນສຸດທີ່ຢູ່ໃນຍ່ານຄວາມຖີ່.
7. ລະຫັດມໍອກ ໝາຍເຖິງ ການສົ່ງຂໍ້ຄວາມໂດຍການປິດ-ເປີດ ລະດັບສຽງ, ແສງ ຫຼື ການເຄາະ ທີ່ສາມາດເຮັດໃຫ້ ຜູ້ຟັງທີ່ມີວິຊາສະເພາະດ້ານນີ້ເຂົ້າໃຈ.

**ມາດຕາ 4 ນະໂຍບາຍກ່ຽວກັບວຽກງານຄື້ນຄວາມຖີ່**

ລັດສົ່ງເສີມບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດນຳໃຊ້ຄື້ນ ຄວາມຖີ່ເຂົ້າໃນການເຄື່ອນໄຫວດຳເນີນທຸລະກິດ, ວຽກງານການສຶກສາ, ສາທາລະນະສຸກ, ການຄົ້ນຄ້ວາວິໄຈ ແລະ ການບັນເທົາໄພພິບັດຕ່າງໆ ຢ່າງມີປະສິດທິພາບ, ປະສິດທິຜົນ, ປອດໄພ ແລະ ຍຸຕິທຳ.

ລັດ ຊຸກຍູ້ ແລະ ສົ່ງເສີມ ການພັດທະນາຊັບພະຍາກອນມະນຸດ ແລະ ການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ກ້າວໜ້າ ເຂົ້າໃນວຽກງານຄຸ້ມຄອງການນຳໃຊ້ທາງດ້ານຄື້ນຄວາມຖີ່.

**ມາດຕາ 5 ຫຼັກການກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ຄື້ນຄວາມຖີ່**

ໃນການຄຸ້ມຄອງ ແລະ ນຳໃຊ້ຄື້ນຄວາມຖີ່ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນຍຸດທະສາດ;
2. ຮັບປະກັນໃຫ້ມີຄວາມຍຸຕິທຳ, ປະສິດທິພາບ, ປະສິດທິຜົນ, ນຳໃຊ້ຖືກເປົ້າໝາຍ ແລະ ບໍ່ໃຫ້ມີການລົບກວນຊຶ່ງກັນ ແລະ ກັນ;
3. ຮັບປະກັນການຄຸ້ມຄອງຢ່າງລວມສູນ ເປັນເອກະພາບທົ່ວປະເທດ;
4. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ;
5. ສອດຄ່ອງກັບສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ຄື້ນຄວາມຖີ່ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄື້ນຄວາມຖີ່ ດ້ວຍການແລກປ່ຽນບົດຮຽນດ້ານວິທະຍາສາດ, ຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີການພັດທະນາ ແລະ ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ແຜນຜັງ, ການຈັດສັນ ແລະ ຍ່ານຄື້ນຄວາມຖີ່

**ມາດຕາ 8 ແຜນຜັງຄື້ນຄວາມຖີ່ແຫ່ງຊາດ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສ້າງແຜນຜັງຄື້ນຄວາມຖີ່ແຫ່ງຊາດ ແລ້ວສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງ ແລະ ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 9 ການຈັດສັນຄື້ນຄວາມຖີ່**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຈັດສັນ, ແບ່ງປັນ ແລະ ເກັບຄືນ ຄື້ນຄວາມຖີ່ທັງໝົດຢູ່ ສປປ ລາວ ໂດຍປະຕິບັດຕາມແຜນຜັງຄື້ນຄວາມຖີ່ແຫ່ງຊາດ, ລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 10 ການຈັດສັນຄື້ນຄວາມຖີ່ ສຳລັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ການຈັດສັນຄື້ນຄວາມຖີ່ ເພື່ອຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນໃຫ້ປະຕິບັດຕາມແຜນຜັງຄື້ນຄວາມຖີ່ແຫ່ງຊາດ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ຄື້ນຄວາມຖີ່ ທີ່ມີເປົ້າໝາຍນຳໃຊ້ຍາວນານ ແມ່ນໃຫ້ຈັດສັນຕາມສັດສ່ວນທີ່ຖືກແບ່ງປັນ ໂດຍປະຕິບັດຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ;
2. ຄື້ນຄວາມຖີ່ທີ່ນຳໃຊ້ມີກຳນົດເວລາ ແມ່ນໃຫ້ຈັດສັນໃຫ້ສະເພາະແຕ່ອຸປະກອນວິທະຍຸທີ່ຂໍນຳໃຊ້ ຕາມກຳນົດເວລາເທົ່ານັ້ນ;
3. ຄື້ນຄວາມຖີ່ທີ່ນຳໃຊ້ຊົ່ວຄາວ ເມື່ອມີການນຳໃຊ້ແລ້ວ ກໍ່ຕ້ອງແຈ້ງໃຫ້ກະຊວງໄປສະນີ,

ໂທລະຄົມມະນາຄົມ ແລະ ການສື່ສານຊາບ ຍົກເວັ້ນກໍລະນີທີ່ເປັນຄວາມລັບຂອງຊາດ;

4. ຄື້ນຄວາມຖີ່ທີ່ນຳໃຊ້ສຸກເສີນ ເພື່ອຄວາມປອດໄພຂອງຊາດ ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ມີສິດນຳໃຊ້ຄື້ນຄວາມຖີ່ສ່ວນໃດສ່ວນໜຶ່ງ ທີ່ບໍ່ໄດ້ກຳນົດໄວ້ໃນ ຂໍ້ 1 ຂອງມາດຕານີ້ ບົນພື້ນຖານແຜນການທີ່ເປັນເອກະພາບກັບ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 11 ການຈັດສັນຄື້ນຄວາມຖີ່ ສຳລັບສະຖານທູດ, ສະຖານກົງສູນ, ສຳນັກງານ ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ**

ການຈັດສັນຄື້ນຄວາມຖີ່ ສຳລັບສະຖານທູດ, ສະຖານກົງສູນ, ສຳນັກງານ ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທີ່ເຄື່ອນໄຫວຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມແຜນຜັງຄື້ນຄວາມຖີ່ແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 12 ຍ່ານຄວາມຖີ່**

ຍ່ານຄວາມຖີ່ ທີ່ນຳໃຊ້ ຢູ່ ສປປ ລາວ ປະກອບດ້ວຍ ແປດ ຍ່ານ ດັ່ງນີ້:

1. ຍ່ານຄວາມຖີ່ຕ່ຳຫຼາຍ (VLF-Very Low Frequency);
2. ຍ່ານຄວາມຖີ່ຕ່ຳ (LF-Low Frequency);
3. ຍ່ານຄວາມຖີ່ກາງ (MF-Medium Frequency);
4. ຍ່ານຄວາມຖີ່ສູງ (HF-High Frequency);
5. ຍ່ານຄວາມຖີ່ສູງຫຼາຍຂັ້ນໜຶ່ງ (VHF-Very High Frequency);
6. ຍ່ານຄວາມຖີ່ສູງຫຼາຍຂັ້ນສອງ (UHF-Ultra High Frequency);
7. ຍ່ານຄວາມຖີ່ສູງຫຼາຍຂັ້ນສາມ (SHF-Super High Frequency);
8. ຍ່ານຄວາມຖີ່ສູງຫຼາຍຂັ້ນສີ່ (EHF-Extremely High Frequency).

ການນຳໃຊ້ຍ່ານຄື້ນຄວາມຖີ່ ອາດປັບປຸງຕາມການຈັດສັນທີ່ໄດ້ກຳນົດໄວ້ໃນແຜນຜັງຄື້ນຄວາມຖີ່ແຫ່ງຊາດ ໃນແຕ່ລະໄລຍະ.

**ມາດຕາ 13 ຍ່ານຄວາມຖີ່ຕ່ຳຫຼາຍ (VLF-Very Low Frequency)**

ຍ່ານຄວາມຖີ່ຕ່ຳຫຼາຍ ແມ່ນຄື້ນຄວາມຖີ່ທີ່ມີຂະໜາດແຕ່ ສາມ ເຖິງ ສາມສິບ ກິໂລເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ແຕ່ ໜຶ່ງຮ້ອຍ ເຖິງ ສິບ ກິໂລແມັດ ທີ່ນຳໃຊ້ສຳລັບການສື່ສານເຊັ່ນ ການສື່ສານໄລຍະໄກ, ການສື່ສານໃຕ້ນ້ຳ.

**ມາດຕາ 14 ຍ່ານຄວາມຖີ່ຕ່ຳ (LF-Low Frequency)**

ຍ່ານຄວາມຖີ່ຕ່ຳ ແມ່ນຄື້ນຄວາມຖີ່ ທີ່ມີຂະໜາດແຕ່ ສາມສິບ ເຖິງ ສາມຮ້ອຍ ກິໂລເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ແຕ່ ສິບ ເຖິງ ໜຶ່ງ ກິໂລແມັດ ທີ່ນຳໃຊ້ສຳລັບການສື່ສານ ເຊັ່ນ ວິທະຍຸ

ກະຈາຍສຽງລະບົບເອເອັມ, ລະບົບນຳທາງການເດີນເຮືອ ແລະ ການບິນ.

**ມາດຕາ 15 ຍ່ານຄວາມຖີ່ກາງ (MF-Medium Frequency)**

ຍ່ານຄວາມຖີ່ກາງ ແມ່ນຄື້ນຄວາມຖີ່ທີ່ມີຂະໜາດແຕ່ ສາມຮ້ອຍ ເຖິງ ສາມພັນ ກິໂລເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ແຕ່ ໜຶ່ງ ກິໂລແມັດ ເຖິງ ໜຶ່ງຮ້ອຍ ແມັດ ທີ່ນຳໃຊ້ສຳລັບການສື່ສານ ເຊັ່ນ ລະບົບນຳທາງການເດີນເຮືອ ແລະ ການບິນ, ການສື່ສານສະໝັກຫລິ້ນ, ວິທະຍຸກະຈາຍສຽງລະບົບ ເອເອັມ, ການເດີນທະເລ ແລະ ສື່ສານການບິນ.

**ມາດຕາ 16 ຍ່ານຄວາມຖີ່ສູງ (HF-High Frequency)**

ຍ່ານຄວາມຖີ່ສູງ ແມ່ນຄື້ນຄວາມຖີ່ທີ່ມີຂະໜາດແຕ່ ສາມ ເຖິງ ສາມສິບ ເມກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ແຕ່ ໜຶ່ງຮ້ອຍ ເຖິງ ສິບ ແມັດ ທີ່ນຳໃຊ້ສຳລັບການສື່ສານ ເຊັ່ນ ການສື່ສານທາງໄກລະບົບຄື້ນສັ້ນ, ການສື່ສານສະໝັກຫລິ້ນ ແລະ ການສື່ສານການບິນ.

**ມາດຕາ 17 ຍ່ານຄວາມຖີ່ສູງຫຼາຍຂັ້ນໜຶ່ງ (VHF-Very High Frequency)**

ຍ່ານຄວາມຖີ່ສູງຫຼາຍຂັ້ນໜຶ່ງ ແມ່ນຄື້ນຄວາມຖີ່ທີ່ມີຂະໜາດແຕ່ ສາມສິບ ເຖິງ ສາມຮ້ອຍ ເມກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ແຕ່ ສິບ ເຖິງ ໜຶ່ງ ແມັດ ທີ່ນຳໃຊ້ສຳລັບການສື່ສານເຊັ່ນ ວິທະຍຸກະຈາຍສຽງລະບົບເອັຟເອັມ, ການສື່ສານສະໝັກຫລິ້ນ, ໂທລະພາບ, ການສື່ສານການບິນ, ການສື່ສານລະບົບໄຟນິ ແລະ ການສື່ສານລະບົບບໍ່ມີສາຍ.

**ມາດຕາ 18 ຍ່ານຄວາມຖີ່ສູງຫຼາຍຂັ້ນສອງ (UHF-Ultra High Frequency)**

ຍ່ານຄວາມຖີ່ສູງຫຼາຍຂັ້ນສອງ ແມ່ນຄື້ນຄວາມຖີ່ທີ່ມີຂະໜາດແຕ່ ສາມຮ້ອຍ ເຖິງ ສາມພັນ ເມກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ແຕ່ ໜຶ່ງ ແມັດ ເຖິງ ໜຶ່ງຮ້ອຍ ມີລີແມັດ ທີ່ນຳໃຊ້ສຳລັບການສື່ສານ ເຊັ່ນ ໂທລະພາບ, ການສື່ສານສະໝັກຫລິ້ນ, ໂທລະສັບເຄື່ອນທີ່ລະບົບຕ່າງໆ, ການສື່ສານລະບົບບໍ່ມີສາຍ ແລະ ການສື່ສານສຳຫຼວດແຮ່ທາດ.

**ມາດຕາ 19 ຍ່ານຄວາມຖີ່ສູງຫຼາຍຂັ້ນສາມ (SHF-Super High Frequency)**

ຍ່ານຄວາມຖີ່ສູງຫຼາຍຂັ້ນສາມ ແມ່ນຄື້ນຄວາມຖີ່ທີ່ມີຂະໜາດແຕ່ ສາມ ເຖິງ ສາມສິບ ຈີກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ແຕ່ ໜຶ່ງຮ້ອຍ ເຖິງ ສິບ ມີລີແມັດ ທີ່ນຳໃຊ້ສຳລັບການສື່ສານ ເຊັ່ນ ການສື່ສານລະບົບບໍ່ມີສາຍ, ການສື່ສານຜ່ານດາວທຽມ, ການສື່ສານດາລາສາດ, ການສື່ສານສຳຫຼວດແຮ່ທາດ, ການສື່ສານລະບົບໄມໂຄເວບ, ລະບົບຣາດາ ແລະ ອຸຕຸນິຍົມວິທະຍາ.

**ມາດຕາ 20 ຍ່ານຄວາມຖີ່ສູງຫຼາຍຂັ້ນສີ່ (EHF-Extremely High Frequency)**

ຍ່ານຄວາມຖີ່ສູງຫຼາຍຂັ້ນສີ່ ແມ່ນຄື້ນຄວາມຖີ່ທີ່ມີຂະໜາດແຕ່ ສາມສິບ ເຖິງ ສາມຮ້ອຍ ຈີກາເຮີດ ແລະ ມີຄວາມຍາວຂອງຄື້ນຄວາມຖີ່ແຕ່ ສິບ ເຖິງ ໜຶ່ງ ມີລີແມັດ ທີ່ນຳໃຊ້ສຳລັບການສື່ສານ ເຊັ່ນ

ລະບົບໄມໂຄຼເວບ, ການສື່ສານດາລາສາດ, ການສື່ສານສຳຫຼວດແຮ່ທາດ, ລະບົບການຢັ້ງສືບທາງໄກ ແລະ ລະບົບຮັກສາຄວາມປອດໄພ.

## ພາກທີ III
## ການນຳໃຊ້ຄື້ນຄວາມຖີ່
### ໝວດທີ 1
### ປະເພດການນຳໃຊ້ຄື້ນຄວາມຖີ່

**ມາດຕາ 21 ປະເພດການນຳໃຊ້ຄື້ນຄວາມຖີ່**

ການນຳໃຊ້ຄື້ນຄວາມຖີ່ ຢູ່ ສປປ ລາວ ມີ ເກົ້າ ປະເພດ ດັ່ງນີ້:

1. ການບໍລິການໂທລະຄົມມະນາຄົມ;
2. ໂທລະພາບ ແລະ ວິທະຍຸກະຈາຍສຽງ;
3. ການສື່ສານການບິນ;
4. ການສື່ສານຜ່ານດາວທຽມ;
5. ການສື່ສານທາງນ້ຳ;
6. ສະຖານີສື່ສານທົ່ວໄປ;
7. ການສື່ສານ ວຽກງານສະເພາະ;
8. ເຄື່ອງຕິດຕໍ່ສື່ສານສະໝັກຫຼິ້ນ;
9. ການສື່ສານສຳລັບວຽກງານທົດລອງນຳໃຊ້ເຕັກໂນໂລຊີໃໝ່.

**ມາດຕາ 22 ການນຳໃຊ້ຄື້ນຄວາມຖີ່ສຳລັບການບໍລິການໂທລະຄົມມະນາຄົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການໂທລະຄົມມະນາຄົມຕາມແຕ່ລະປະເພດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ສະບັບປັບປຸງ ຕ້ອງໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 23 ການນຳໃຊ້ຄື້ນຄວາມຖີ່ສຳລັບໂທລະພາບ ແລະ ວິທະຍຸກະຈາຍສຽງ**

ການນຳໃຊ້ຄື້ນຄວາມຖີ່ສຳລັບການສະໜອງການບໍລິການດ້ານໂທລະພາບ ແລະ ວິທະຍຸກະຈາຍສຽງ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດນຳກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ ຕ້ອງສະໜອງຂໍ້ມູນທາງດ້ານເຕັກນິກ ໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ດັ່ງນີ້:

1. ຈຸດທີ່ຕັ້ງຂອງສະຖານີ ລວມທັງຈຸດທີ່ຕັ້ງ ຂອງເຄື່ອງສົ່ງ-ເຄື່ອງຮັບ;

2. ຄວາມແຮງອອກອາກາດ ຂອງເຄື່ອງສົ່ງ-ເຄື່ອງຮັບ;

3. ຮູບແບບການກະຈາຍຄື້ນຄວາມຖີ່ ຂອງເຄື່ອງສົ່ງ-ເຄື່ອງຮັບ;

4. ພື້ນທີ່ຄວບຄຸມຂອງສັນຍານ;

5. ຄຸນລັກສະນະທາງດ້ານເຕັກນິກ;

6. ຂໍ້ມູນເຕັກນິກອື່ນໆທີ່ກ່ຽວຂ້ອງ.

ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ ຈະປ່ຽນແປງຂໍ້ມູນດ້ານເຕັກນິກ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ໄດ້ ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານເທົ່ານັ້ນ.

## ມາດຕາ 24 ການນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານການບິນ

ການນຳໃຊ້ຄື້ນຄວາມຖີ່ສຳລັບສະຖານີສື່ສານການບິນພາກພື້ນດິນ, ລະບົບບອກຈຸດພິກັດ ຫຼື ລະບົບບັນຊາການບິນ ຫຼື ສະຖານີຕິດຕັ້ງຢູ່ນຳເຮືອບິນທີ່ໄດ້ຂຶ້ນທະບຽນ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດນຳກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ອຸປະກອນວິທະຍຸສື່ສານທີ່ຕິດຕັ້ງຢູ່ສະຖານີຢູ່ນຳເຮືອບິນ ຕ້ອງສອດຄ່ອງກັບລະບຽບການ ຂອງອົງການການບິນພົນລະເຮືອນສາກົນ ແລະ ຜ່ານການຮັບຮອງຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານການບິນ ຕ້ອງປະຕິບັດຕາມ ດຳລັດສະບັບນີ້ ແລະ ລະບຽບການພາຍໃນ ຫຼື ສາກົນອື່ນ ທີ່ກ່ຽວກັບການສື່ສານການບິນ ແລະ ອະນຸຍາດໃຫ້ນຳໃຊ້ສະຖານີທີ່ຕິດຕັ້ງຢູ່ນຳເຮືອບິນ ໃນເວລາບິນຜ່ານນ່ານຟ້າ ຂອງ ສປປ ລາວ ດັ່ງນີ້:

1. ເຫດການສຸກເສີນ;

2. ການສື່ສານ ແລະ ລະບົບບັນຊາການບິນ;

3. ຈຸດປະສົງເພື່ອເຮັດການທົດລອງການນຳໃຊ້ສະຖານີ.

## ມາດຕາ 25 ການນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານຜ່ານດາວທຽມ

ການນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານຜ່ານດາວທຽມ ຕ້ອງຂໍອະນຸຍາດນຳ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ດັ່ງນີ້:

1. ສະຖານີສື່ສານພາກພື້ນດິນ-ດາວທຽມ;

2. ສະຖານີຕິດຕາມ ແລະຄວບຄຸມດາວທຽມ;

3. ສະຖານີຮັບ-ສົ່ງ ສັນຍານດາວທຽມຍ່ອຍ;

4. ອຸປະກອນພົກພາສື່ສານຜ່ານດາວທຽມ.

ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານຜ່ານດາວທຽມ ຕ້ອງປະຕິບັດ ດັ່ງນີ້:

1. ຕ້ອງໄດ້ຮັບອະນຸຍາດຈາກ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ອນການນຳໃຊ້;
2. ປະຕິບັດຕາມລະບຽບການກ່ຽວກັບການໃຫ້ບໍລິການ ການສື່ສານດາວທຽມ;
3. ນຳໃຊ້ຄື້ນຄວາມຖີ່ ຫຼື ຍ່ານຄື້ນຄວາມຖີ່ ທີ່ໄດ້ຈັດສັນ ແລະ ອະນຸຍາດຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ຜູ້ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານຜ່ານດາວທຽມ ຕ້ອງປະຕິບັດລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ດຳລັດສະບັບນີ້ ແລະ ລະບຽບການອື່ນ ກ່ຽວກັບການນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານຜ່ານດາວທຽມ ຂອງ ສປປ ລາວ.

### ມາດຕາ 26 ການນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານທາງນ້ຳ

ການນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານທາງນ້ຳ ເຊັ່ນ ສະຖານີບັນຊາທີ່ຕິດຕັ້ງຢູ່ແຄມຝັ່ງ ຫຼື ລະບົບບອກຈຸດພິກັດທີ່ຕິດຕັ້ງຢູ່ບ່າກຳປັ່ນ, ເຮືອຂົນສົ່ງ ແລະ ເຮືອປະມົງ ຕ້ອງຂໍອະນຸຍາດນຳກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ການຂໍອະນຸຍາດນຳໃຊ້ຄື້ນຄວາມຖີ່ສຳລັບການສື່ສານທາງນ້ຳ ມີເງື່ອນໄຂ ດັ່ງນີ້:

1. ກຳປັ່ນ ທີ່ຈະຕິດຕັ້ງສະຖານີ ຕ້ອງມີໃບຢັ້ງຢືນການເດີນທະເລ ຈາກອົງການສາກົນ ທີ່ກ່ຽວຂ້ອງ;
2. ເຮືອຂົນສົ່ງ ຕ້ອງມີໃບຢັ້ງຢືນຈາກຂະແໜງໂຍທາທິການ ແລະ ຂົນສົ່ງ;
3. ເຮືອປະມົງ ຕ້ອງມີໃບຢັ້ງຢືນຈາກຂະແໜງກະສິກຳ ແລະ ປ່າໄມ້;
4. ປະຕິບັດຕາມລະບຽບການ ຂອງສະຫະພາບໂທລະຄົມມະນາຄົມສາກົນ, ອົງການເດີນທະເລສາກົນ, ດຳລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

### ມາດຕາ 27 ການນຳໃຊ້ຄື້ນຄວາມຖີ່ສຳລັບສະຖານີສື່ສານທົ່ວໄປ

ການນຳໃຊ້ຄື້ນຄວາມຖີ່ສຳລັບສະຖານີສື່ສານທົ່ວໄປ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດນຳກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ດັ່ງນີ້:

1. ການສື່ສານ ລະຫວ່າງ ສອງຈຸດ;
2. ການສື່ສານຕິດຕໍ່ຈາກຈຸດໜຶ່ງຫາຫຼາຍຈຸດ;
3. ການສື່ສານລະບົບໄຟນີ;
4. ການສື່ສານສະເພາະກິດຈະການ;
5. ການສື່ສານລະບົບບັນຊາ ແລະ ບອກຈຸດພິກັດ.

### ມາດຕາ 28 ການນຳໃຊ້ຄື້ນຄວາມຖີ່ສຳລັບວຽກງານສະເພາະ

ການຕິດຕັ້ງອຸປະກອນ ແລະ ການນຳໃຊ້ຄື້ນຄວາມຖີ່ສຳລັບວຽກງານສະເພາະ ຕ້ອງຂໍອະນຸຍາດນຳ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ຜູ້ທີ່ໄດ້ຮັບອະນຸຍາດ ດັ່ງກ່າວຕ້ອງເສຍຄ່ານຳໃຊ້ຕາມລະບຽບກົດໝາຍ.

ການນຳໃຊ້ຄື້ນຄວາມຖີ່ສຳລັບວຽກງານສະເພາະ ປະກອບດ້ວຍ:

- ກອງປະຊຸມຂອງລັດຖະບານ;
- ກອງປະຊຸມສາກົນ;
- ຕະຫຼາດນັດ, ງານວາງສະແດງຜະລິດຕະພັນ ແລະ ສິນຄ້າ, ເຄື່ອງຂອງ;
- ກອງປະຊຸມ ແລະ ງານວາງສະແດງອື່ນ.

ມາດຕາ 29 ການນຳໃຊ້ຄື້ນຄວາມຖີ່ສຳລັບເຄື່ອງຕິດຕໍ່ສື່ສານສະໝັກຫຼິ້ນ

ການນຳໃຊ້ຄື້ນຄວາມຖີ່ສຳລັບເຄື່ອງຕິດຕໍ່ສື່ສານສະໝັກຫຼິ້ນ ເພື່ອສົ່ງເສີມການຄົ້ນຄ້ວາດ້ານເຕັກນິກການສື່ສານ, ວັດທະນະທຳ, ການທ່ອງທ່ຽວ ແລະ ການຊ່ວຍເຫຼືອສັງຄົມ ຕ້ອງຂໍອະນຸຍາດນຳກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຊຶ່ງປະກອບມີ ສອງປະເພດ ດັ່ງນີ້:

1. ປະເພດທົ່ວໄປ ຊຶ່ງອະນຸຍາດໃຫ້ສົ່ງສັນຍານເປັນລະຫັດມໍອກ;
2. ປະເພດສະເພາະ ຊຶ່ງບໍ່ອະນຸຍາດໃຫ້ນຳໃຊ້ລະຫັດມໍອກ.

ການຄຸ້ມຄອງການນຳໃຊ້ເຄື່ອງຕິດຕໍ່ສື່ສານສະໝັກຫຼິ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

ມາດຕາ 30 ການນຳໃຊ້ຄື້ນຄວາມຖີ່ສຳລັບວຽກງານທົດລອງນຳໃຊ້ເຕັກໂນໂລຊີໃໝ່

ການນຳໃຊ້ຄື້ນຄວາມຖີ່ສຳລັບວຽກງານທົດລອງນຳໃຊ້ເຕັກໂນໂລຊີໃໝ່ ຕ້ອງຂໍອະນຸຍາດນຳກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ຕາມລະບຽບການ ທີ່ກ່ຽວຂ້ອງ ດັ່ງນີ້:

1. ນຳໃຊ້ໃນຮູບແບບ ທີ່ບໍ່ມີຈຸດປະສົງເພື່ອດຳເນີນທຸລະກິດ;
2. ນຳໃຊ້ໃນການກວດສອບມາດຕະຖານເຕັກນິກ.

ການນຳໃຊ້ຄື້ນຄວາມຖີ່ສຳລັບວຽກງານທົດລອງນຳໃຊ້ເຕັກໂນໂລຊີໃໝ່ ຈະໄດ້ຮັບການຍົກເວັ້ນຄ່ານຳໃຊ້ໃນໄລຍະເວລາທົດລອງ ຕາມການພິຈາລະນາອະນຸຍາດໃຫ້ນຳໃຊ້.

ມາດຕາ 31 ການນຳໃຊ້ອຸປະກອນຄື້ນຄວາມຖີ່ ທີ່ມີກຳລັງສົ່ງຕ່ຳ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ອຸປະກອນຄື້ນຄວາມຖີ່ ທີ່ມີກຳລັງສົ່ງແຕ່ ສູນຈຸດສູນຫ້າ ວັດລົງມາ ບໍ່ຈຳເປັນຕ້ອງຂໍອະນຸຍາດການນຳໃຊ້ຈາກ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ມາດຕາ 32 ເງື່ອນໄຂໃນການນຳໃຊ້ຄື້ນຄວາມຖີ່

ຜູ້ໄດ້ຮັບອະນຸຍາດໃຫ້ນຳໃຊ້ຄື້ນຄວາມຖີ່ ຕ້ອງປະຕິບັດຕາມເງື່ອນໄຂ ຂອງການນຳໃຊ້ຄື້ນຄວາມຖີ່ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ດັ່ງນີ້:

1. ຕິດຕັ້ງອຸປະກອນ ແລະ ດຳເນີນກິດຈະການ ຕາມທີ່ໄດ້ຮັບອະນຸຍາດ;
2. ນຳໃຊ້ຄື້ນຄວາມຖີ່ທີ່ໄດ້ຮັບອະນຸຍາດ;

3. ປະຕິບັດຕາມມາດຕະຖານເຕັກນິກທີ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໄດ້ວາງອອກໃນແຕ່ລະໄລຍະ;
4. ໄດ້ຮັບອະນຸຍາດຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ອນການເຊື່ອມຕໍ່ກັບເຄືອຂ່າຍໂທລະຄົມມະນາຄົມອື່ນ;
5. ຮັບປະກັນການນຳໃຊ້ຄື້ນຄວາມຖີ່ ໃຫ້ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ແລະ ບໍ່ໃຫ້ລົບກວນຜູ້ໄດ້ຮັບອະນຸຍາດອື່ນ;
6. ນຳໃຊ້ຄື້ນຄວາມຖີ່ໃນຂອບເຂດພື້ນທີ່ ທີ່ໄດ້ຮັບອະນຸຍາດຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
7. ລາຍງານຂໍ້ມູນສະຖິຕິກ່ຽວກັບການນຳໃຊ້ຄື້ນຄວາມຖີ່ ແລະ ອຸປະກອນໂທລະຄົມມະນາຄົມ ເຊັ່ນ ຈຳນວນເສົາອາກາດ, ພື້ນທີ່ສະໜອງການບໍລິການ, ຄວາມແຮງສົ່ງຂອງສັນຍານ, ຈຸດທີ່ຕັ້ງ ພ້ອມດ້ວຍຄວາມສູງຂອງເສົາອາກາດ ແລະ ລະຫັດການກະຈາຍຄື້ນຄວາມຖີ່ ຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ.

## ໝວດທີ 2
## ການອະນຸຍາດນຳໃຊ້ຄື້ນຄວາມຖີ່

### ມາດຕາ 33 ການອະນຸຍາດນຳໃຊ້ຄື້ນຄວາມຖີ່

ການອະນຸຍາດນຳໃຊ້ຄື້ນຄວາມຖີ່ ແມ່ນການໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສິດນຳໃຊ້ຍ່ານຄື້ນຄວາມຖີ່ໃດໜຶ່ງ ພ້ອມທັງກຳນົດເງື່ອນໄຂຂອງການນຳໃຊ້ແຕ່ລະຍ່ານຄື້ນຄວາມຖີ່ນັ້ນ ເຊັ່ນ ຈຸດປະສົງຂອງການນຳໃຊ້, ປະເພດຂອງການນຳໃຊ້, ຂອບເຂດຂອງຄື້ນຄວາມຖີ່ທີ່ຈະນຳໃຊ້, ຄວາມແຮງຂອງການກະຈາຍຄື້ນຄວາມຖີ່ສູງສຸດ ແລະ ເງື່ອນໄຂອື່ນຕາມລະບຽບການ.

### ມາດຕາ 34 ເງື່ອນໄຂການອະນຸຍາດນຳໃຊ້ຄື້ນຄວາມຖີ່

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອະນຸຍາດໃຫ້ບຸກຄົນ, ນິຕິບຸກ ຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ນຳໃຊ້ຄື້ນຄວາມຖີ່ ຕາມເງື່ອນໄຂ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍດ້ານຄື້ນຄວາມຖີ່ ແລະ ແຜນຜັງຄື້ນຄວາມຖີ່ແຫ່ງຊາດ;
2. ມີແຜນນຳໃຊ້, ພັດທະນາ ແລະ ແຜນການດຳເນີນກິດຈະການຂອງຕົນ;
3. ຮັບປະກັນມາດຕະຖານເຕັກນິກ;
4. ມີໃບຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;
5. ຊຳລະຄ່າທຳນຽມ ແລະ ຄ່າບໍລິການໃຫ້ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ;

6. ມີໃບອະນຸຍາດດຳເນີນທຸລະກິດຈາກອົງການທີ່ກ່ຽວຂ້ອງ ສຳລັບຜູ້ທີ່ມີຈຸດປະສົງນຳໃຊ້ຄື້ນຄວາມຖີ່ ເພື່ອດຳເນີນທຸລະກິດໃດໜຶ່ງ.

### ມາດຕາ 35 ການຍື່ນຄຳຮ້ອງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງນຳໃຊ້ຄື້ນຄວາມຖີ່ ຕ້ອງຍື່ນຄຳຮ້ອງຕໍ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ເອກະສານປະກອບ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມສຳລັບແຕ່ລະປະເພດການອະນຸຍາດສະເພາະ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ແຜນພັດທະນາເຄືອຂ່າຍ ແລະ ແຜນການດຳເນີນກິດຈະການຂອງຕົນ;
3. ສຳເນົາຂໍ້ຕົກລົງ ຫຼື ໜັງສືຢັ້ງຢືນ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ສຳລັບອົງການຈັດຕັ້ງ;
4. ສຳເນົາທະບຽນວິສາຫະກິດ ສຳລັບວິສາຫະກິດ.

### ມາດຕາ 36 ການພິຈາລະນາຄຳຮ້ອງ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ພິຈາລະນາການອະນຸຍາດ ໃຫ້ຜູ້ຮ້ອງຂໍນຳໃຊ້ຄື້ນຄວາມຖີ່ ພາຍໃນກຳນົດເວລາ ສາມສິບ ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ ເມື່ອເຫັນວ່າເອກະສານຖືກຕ້ອງ, ຄົບຖ້ວນ ແລະ ມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ແລ້ວ, ໃນກໍລະນີ ຫາກເຫັນວ່າເອກະສານບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ແລະ ບໍ່ມີເງື່ອນໄຂ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບ ພາຍໃນກຳນົດເວລາ ຫ້າ ວັນ.

ໃນກໍລະນີຫາກບໍ່ອະນຸຍາດ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຊາບ ພາຍໃນກຳນົດເວລາ ຫ້າ ວັນ.

### ມາດຕາ 37 ອາຍຸຂອງໃບອະນຸຍາດນຳໃຊ້ຄື້ນຄວາມຖີ່

ໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ ມີອາຍຸສູງສຸດ ໜຶ່ງ ປີ ແລະ ສາມາດຕໍ່ໄດ້ ຕາມອາຍຸໃບອະນຸຍາດດຳເນີນທຸລະກິດດ້ານໂທລະຄົມມະນາຄົມແຕ່ລະປະເພດ.

ສຳລັບວຽກງານສຸກເສີນ, ໄພພິບັດ, ຊ່ວຍເຫຼືອສັງຄົມ ແລະວຽກງານສະເພາະ ຂອງລັດຖະບານນັ້ນ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ອອກໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ ທີ່ມີອາຍຸຕໍ່າກວ່າ ໜຶ່ງ ປີ ຕາມແຕ່ລະກໍລະນີ.

### ມາດຕາ 38 ການຕໍ່ອາຍຸການນຳໃຊ້ຄື້ນຄວາມຖີ່

ຜູ້ນຳໃຊ້ຄື້ນຄວາມຖີ່ ສາມາດຂໍຕໍ່ອາຍຸການນຳໃຊ້ຄື້ນຄວາມຖີ່ ພາຍໃນກຳນົດເວລາ ຫົກສິບ ວັນ ກ່ອນວັນໝົດອາຍຸນຳໃຊ້.

ການຂໍຕໍ່ອາຍຸດັ່ງກ່າວ ຈະໄດ້ຮັບການພິຈາລະນາອະນຸຍາດ ກໍ່ຕໍ່ເມື່ອຜູ້ນຳໃຊ້ຄື້ນຄວາມຖີ່ ໄດ້ປະຕິບັດ ດັ່ງນີ້:

1. ເຄື່ອນໄຫວກິດຈະການຂອງຕົນພາຍໃນກຳນົດເວລາ ໜຶ່ງ ປີ ນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ;
2. ປະຕິບັດຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນໃບອະນຸຍາດ;
3. ປະຕິບັດພັນທະ ແລະ ເສຍຄ່າທຳນຽມຢ່າງຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນລະບຽບ ກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 39 ການຖອນໃບອະນຸຍາດນຳໃຊ້ຄື້ນຄວາມຖີ່**

ຜູ້ນຳໃຊ້ຄື້ນຄວາມຖີ່ ຈະຖືກຖອນໃບອະນຸຍາດນຳໃຊ້ ໃນກໍລະນີ ໃດໜຶ່ງ ດັ່ງນີ້:

1. ບໍ່ເຄື່ອນໄຫວກິດຈະການຂອງຕົນ ພາຍໃນກຳນົດເວລາ ເກົ້າ ເດືອນ ນັບແຕ່ວັນໄດ້ຮັບອະນຸຍາດເປັນຕົ້ນໄປ;
2. ດຳເນີນກິດຈະການບໍ່ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ;
3. ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບອະນຸຍາດ;
4. ບໍ່ປະຕິບັດພັນທະ ແລະ ບໍ່ເສຍຄ່າທຳນຽມຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ ກົດໝາຍທີ່ກ່ຽວຂ້ອງ;
5. ລະເມີດດຳລັດສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ອອກແຈ້ງການການຖອນ ໃບອະນຸຍາດນຳໃຊ້ຄື້ນຄວາມຖີ່ ພ້ອມດ້ວຍເຫດຜົນເປັນລາຍລັກອັກສອນກ່ຽວກັບການຖອນ ໃບອະນຸຍາດນຳໃຊ້ດັ່ງກ່າວ.

## ໝວດທີ 3
## ຄ່ານຳໃຊ້ຄື້ນຄວາມຖີ່

**ມາດຕາ 40 ຄ່ານຳໃຊ້ຄື້ນຄວາມຖີ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຄື້ນຄວາມຖີ່ ຕ້ອງເສຍຄ່ານຳໃຊ້ ຕາມອັດຕາທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 41 ການປະມູນຄ່ານຳໃຊ້ຄື້ນຄວາມຖີ່**

ການນຳໃຊ້ຄື້ນຄວາມຖີ່ ເພື່ອດຳເນີນທຸລະກິດໃຫ້ບໍລິການດ້ານໂທລະຄົມມະນາຄົມ ອາດມີ ການປະມູນການນຳໃຊ້ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ມາດຕາ 42 ການຍົກເວັ້ນຄ່ານຳໃຊ້ຄື້ນຄວາມຖີ່ ✓

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ອາດໄດ້ຮັບການຍົກເວັ້ນຄ່ານຳໃຊ້ຄື້ນຄວາມຖີ່ ເຂົ້າໃນວຽກງານຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ສະບັບປັບປຸງ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ.

## ພາກທີ IV
## ສິດ ແລະ ພັນທະຂອງຜູ້ນຳໃຊ້ຄື້ນຄວາມຖີ່

ມາດຕາ 43 ສິດຂອງຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່

ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ ມີ ສິດ ດັ່ງນີ້:

1. ໄດ້ຮັບຜົນປະໂຫຍດຈາກການນຳໃຊ້ຄື້ນຄວາມຖີ່;
2. ນຳເຂົ້າ ແລະ ຕິດຕັ້ງອຸປະກອນຄື້ນຄວາມຖີ່ ຕາມທີ່ໄດ້ຮັບອະນຸຍາດ;
3. ຂາຍ, ໂອນ ແລະ ໃຫ້ເຊົ່າສິດນຳໃຊ້ຄື້ນຄວາມຖີ່ ຕາມທີ່ໄດ້ຮັບອະນຸຍາດ;
4. ໄດ້ຮັບການຕໍ່ອາຍຸນຳໃຊ້ ຫຼືຍົກເລີກການນຳໃຊ້ຄື້ນຄວາມຖີ່;
5. ໄດ້ຮັບສິດອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 44 ພັນທະຂອງຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່

ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ ມີ ພັນທະ ດັ່ງນີ້:

1. ລາຍງານ ຫຼື ແຈ້ງຕໍ່ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນກໍລະນີມີຄື້ນລົບກວນ ຫຼື ມີການປ່ຽນແປງຄື້ນຄວາມຖີ່;
2. ຮັບປະກັນການນຳໃຊ້ໃຫ້ມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ບໍ່ລົບກວນການນຳໃຊ້ຄື້ນຄວາມຖີ່ອື່ນ;
3. ຢູ່ພາຍໃຕ້ການກວດກາຂອງຂະແໜງການທີ່ກ່ຽວຂ້ອງ;
4. ປະຕິບັດລະບຽບການດ້ານບັນຊີການເງິນ, ສະຖິຕິ ແລະ ລະບອບລາຍງານ;
5. ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບກົດໝາຍ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ V
## ການກວດກາການນຳໃຊ້ຄື້ນຄວາມຖີ່

ມາດຕາ 45 ເປົ້າໝາຍກວດກາການນຳໃຊ້ຄື້ນຄວາມຖີ່

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ຄື້ນຄວາມຖີ່ ແລະ ອຸປະກອນກະຈາຍຄື້ນຄວາມຖີ່ ຢູ່ ດິນແດນຂອງ ສປປ ລາວ ລວມທັງການກະຈາຍຄື້ນຄວາມຖີ່

ຂອງຕ່າງປະເທດ ທີ່ລ່ວງລ້ຳເຂົ້າມາໃນດິນແດນ ຂອງ ສປປ ລາວ ຕ້ອງຢູ່ພາຍໃຕ້ການກວດກາຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ມາດຕາ 46 ການກວດກາຄື້ນຄວາມຖີ່

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີໜ້າທີ່ຕິດຕາມກວດກາຄື້ນຄວາມຖີ່ ແລະ ອຸປະກອນກະຈາຍຄື້ນຄວາມຖີ່ ໃນຂອບເຂດທົ່ວປະເທດ ເປັນຕົ້ນ ການກວດກາຈຸດທີ່ຕັ້ງຂອງສະຖານີວິທະຍຸ, ຮູບແບບຂອງສັນຍານຄື້ນຄວາມຖີ່, ຮູບແບບຂອງການຮັບສັນຍານຄື້ນຄວາມຖີ່ ແລະ ໃບຢັ້ງຢືນການນຳໃຊ້. ນອກຈາກນີ້ ຍັງວັດແທກບັນດາເຕັກນິກຕົວຊີ້ວັດ, ອັດຕາການນຳໃຊ້ຄື້ນຄວາມຖີ່ ຂອງສະຖານີວິທະຍຸ, ຊອກຫາທີ່ມາຂອງຄື້ນລົບກວນ ພ້ອມທັງປະຕິບັດມາດຕະການຕໍ່ຜູ້ນຳໃຊ້ທີ່ລະເມີດລະບຽບກົດໝາຍ.

ມາດຕາ 47 ການແກ້ໄຂບັນຫາກ່ຽວກັບຄື້ນລົບກວນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເມື່ອມີບັນຫາຄື້ນຖືກລົບກວນ ຕ້ອງສະເໜີຕໍ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອຊອກຫາທີ່ມາຂອງຄື້ນລົບກວນ ພ້ອມດ້ວຍວິທີການແກ້ໄຂ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ຄື້ນຄວາມຖີ່ ແລະ ອຸປະກອນກະຈາຍຄື້ນຢູ່ໃນພື້ນທີ່ຂອງຄື້ນລົບກວນ ຕ້ອງອຳນວຍຄວາມສະດວກໃຫ້ເຈົ້າໜ້າທີ່, ພະນັກງານ ເພື່ອຊອກຫາທີ່ມາຂອງຄື້ນລົບກວນ ແລະ ແກ້ໄຂໃຫ້ທັນເວລາ.

ໃນການແກ້ໄຂບັນຫາຄື້ນລົບກວນ ໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານປະຕິບັດຕາມຫຼັກການ ດັ່ງນີ້:

1. ຄື້ນທີ່ເຮັດໃຫ້ເກີດການລົບກວນ ຕ້ອງຫຼຸດຜ່ອນ ໃຫ້ຢູ່ໃນລະດັບຕ່ຳສຸດ;
2. ໃຫ້ບູລິມະສິດແກ່ສະຖານີສື່ສານຕົ້ນ ສ່ວນສະຖານີສື່ສານທີ່ໃຫ້ບໍລິການອີກຕໍ່ໜຶ່ງ ຕ້ອງປັບປ່ຽນຄື້ນຄວາມຖີ່, ເຕັກນິກກະຈາຍຄື້ນຄວາມຖີ່ ຫຼື ອຸປະກອນຂອງຕົນ ຄືນໃໝ່;
3. ຢູ່ໃນພື້ນທີ່ດຽວກັນທີ່ມີການນຳໃຊ້ຄື້ນຄວາມຖີ່ ຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ຕາມຫຼັງ ຕ້ອງໃຫ້ບູລິມະສິດແກ່ຜູ້ໄດ້ຮັບອະນຸຍາດກ່ອນ;

ໃນກໍລະນີຄື້ນລົບກວນດັ່ງກ່າວ ຍັງບໍ່ທັນໄດ້ຮັບການແກ້ໄຂ ຜູ້ນຳໃຊ້ຄື້ນຄວາມຖີ່ສາມາດໃຊ້ວິທີການດັດປັບຄື້ນຄວາມຖີ່, ຫຼຸດຜ່ອນຄວາມສາມາດກະຈາຍຄື້ນຄວາມຖີ່ລົງ, ດັດປັບຄວາມສູງຂອງເສົາອາກາດ, ດັດປັບຄື້ນຄວາມຖີ່ໃຫ້ໄປທິດທາງດຽວ, ຈັດສັນເວລາກະຈາຍຄື້ນຄວາມຖີ່ຄືນໃໝ່ ແລະ ນຳໃຊ້ວິທີການອື່ນທີ່ເຫັນວ່າຈຳເປັນ.

ຜູ້ທີ່ກໍ່ໃຫ້ເກີດຄື້ນລົບກວນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍໃຫ້ແກ່ ຜູ້ນຳໃຊ້ຄື້ນຄວາມຖີ່ອື່ນ ທີ່ໄດ້ຮັບຄວາມເສັຍຫາຍ.

ມາດຕາ 48 ມາດຕະການຫຼຸດຜ່ອນຄື້ນລົບກວນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຄື້ນຄວາມຖີ່ ແລະ ອຸປະກອນກະຈາຍຄື້ນຄວາມຖີ່ ຕ້ອງປະຕິບັດໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມເງື່ອນໄຂ ທີ່ກຳນົດໄວ້ ໃນໃບອະນຸຍາດ ແລະ ຕ້ອງນຳໃຊ້ມາດຕະການຫຼຸດຜ່ອນຄື້ນລົບກວນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຮັກສາອັດຕາຂອງການກະຈາຍຄື້ນຄວາມຖີ່ ໃຫ້ຢູ່ໃນລະດັບຕາມການອະນຸຍາດ;
2. ຫຼຸດຜ່ອນລະດັບການກະຈາຍຄື້ນຄວາມຖີ່ ທີ່ອາດພາໃຫ້ເກີດຄື້ນລົບກວນ;
3. ດັດປັບທິດທາງການກະຈາຍຄື້ນຄວາມຖີ່;
4. ດັດປັບຄວາມສູງຂອງເສົາອາກາດ;
5. ຕິດຕັ້ງສະຖານີວິທະຍຸ ຢູ່ຫ່າງກັນໃນລະດັບທີ່ເໝາະສົມ ໃນກໍລະນີນຳໃຊ້ຄື້ນຄວາມຖີ່ດຽວກັນ.

ມາດຕາ 49 ມາດຕະການສະກັດກັ້ນຄື້ນຄວາມຖີ່ລົບກວນຂອງຕ່າງປະເທດ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງແກ້ໄຂບັນຫາຄື້ນຄວາມຖີ່ລົບກວນຂອງຕ່າງປະເທດ ໂດຍປະຕິບັດຕາມລະບຽບກົດໝາຍ, ລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ, ສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

# ພາກທີ VI
# ຂໍ້ຫ້າມ

ມາດຕາ 50 ຂໍ້ຫ້າມ ສໍາລັບພະນັກງານຄຸ້ມຄອງຄື້ນຄວາມຖີ່

ຫ້າມພະນັກງານຄຸ້ມຄອງຄື້ນຄວາມຖີ່ ມີ ພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບຂອງຊາດ, ກົດໜ່ວງຖ່ວງດຶງ, ປອມແປງເອກະສານ ກ່ຽວກັບການນຳໃຊ້ຄື້ນຄວາມຖີ່;
2. ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ບຸກຄົນ, ລວມໝູ່, ລັດ ແລະ ການຈັດຕັ້ງ;
3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບທີ່ການຈັດຕັ້ງມອບໝາຍໃຫ້;
4. ດຳລົງຕຳແໜ່ງໃດໜຶ່ງ ຫຼືເປັນທີ່ປຶກສາ ໃຫ້ຫົວໜ່ວຍທຸລະກິດ ນຳເຂົ້າ, ຈຳໜ່າຍ, ສ້ອມແປງອຸປະກອນກ່ຽວກັບການນຳໃຊ້ຄື້ນຄວາມຖີ່;
5. ດຳເນີນທຸລະກິດກ່ຽວກັບການນຳໃຊ້ຄື້ນຄວາມຖີ່;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

ມາດຕາ 51 ຂໍ້ຫ້າມ ສຳລັບຜູ້ທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຄື້ນຄວາມຖີ່

ຫ້າມຜູ້ທີ່ໄດ້ຮັບອະນຸຍາດນຳໃຊ້ຄື້ນຄວາມຖີ່ ມີ ພຶດຕິກຳ ດັ່ງນີ້:

1. ນຳໃຊ້ຄື້ນຄວາມຖີ່ລົບກວນ, ສ້າງຄວາມເສັຍຫາຍ ຕໍ່ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
2. ໂອນ, ຂາຍ ແລະ ໃຫ້ເຊົ່າສິດນຳໃຊ້ຄື້ນຄວາມຖີ່ ໂດຍບໍ່ໄດ້ຮັບອະນຸຍາດ;
3. ນຳໃຊ້ຄື້ນຄວາມຖີ່ເຂົ້າໃນຈຸດປະສົງອື່ນທີ່ບໍ່ໄດ້ກຳນົດໄວ້ໃນໃບອະນຸຍາດ;
4. ນຳໃຊ້ຄື້ນຄວາມຖີ່ເກີນຂອບເຂດອະນຸຍາດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

ມາດຕາ 52 ຂໍ້ຫ້າມ ສຳລັບບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງອື່ນ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ນຳໃຊ້ຄື້ນຄວາມຖີ່ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳເຂົ້າ, ຜະລິດ, ຕິດຕັ້ງ ແລະ ຈຳໜ່າຍ ອຸປະກອນກ່ຽວກັບຄື້ນຄວາມຖີ່ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສ້າງຄວາມເສັຍຫາຍໃຫ້ແກ່ສະຖານີວິທະຍຸ, ອຸປະກອນກວດກາ ແລະ ອຸປະກອນກ່ຽວກັບຄື້ນຄວາມຖີ່;
4. ຂັດຂວາງການຕິດຕັ້ງອຸປະກອນກ່ຽວກັບຄື້ນຄວາມຖີ່ ແລະ ການປະຕິບັດວຽກງານຂອງເຈົ້າໜ້າທີ່ກວດກາຄື້ນຄວາມຖີ່;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ VII
## ການແກ້ໄຂຂໍ້ຂັດແຍ່ງ

ມາດຕາ 53 ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການນຳໃຊ້ຄື້ນຄວາມຖີ່ ດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມໂດຍຄູ່ກໍລະນີ;
2. ການໄກ່ເກ່ຍ;
3. ການແກ້ໄຂທາງດ້ານບໍລິຫານ;
4. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
5. ການຮ້ອງຟ້ອງຕໍ່ສານປະຊາຊົນ;
6. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

ມາດຕາ 54 ການປະນີປະນອມໂດຍຄູ່ກໍລະນີ

ໃນກໍລະນີ ມີຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນກະທົບຕໍ່ການນຳໃຊ້ຄື້ນຄວາມຖີ່ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າເສັຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີ ສາມາດປຶກສາຫາລື ແລະ ປະນີປະນອມນຳກັນ ເພື່ອແກ້ໄຂຂໍ້ຂັດແຍ່ງນັ້ນ.

ມາດຕາ 55 ການໄກ່ເກ່ຍ

ໃນກໍລະນີ ມີຂໍ້ຂັດແຍ່ງທີ່ກໍ່ໃຫ້ເກີດຜົນກະທົບຕໍ່ການນຳໃຊ້ຄື້ນຄວາມຖີ່ ຊຶ່ງບໍ່ຮ້າຍແຮງ ແລະ ມີມູນຄ່າເສັຍຫາຍບໍ່ຫຼວງຫຼາຍ ຄູ່ກໍລະນີ ສາມາດແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ.

ມາດຕາ 56 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ບໍ່ສາມາດຕົກລົງກັນ ຫຼື ບໍ່ສາມາດແກ້ໄຂດ້ວຍການການປະນີປະນອມກັນໄດ້ ຄູ່ກໍລະນີ ມີສິດສະເໜີໃຫ້ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ພິຈາລະນາແກ້ໄຂ.

ມາດຕາ 57 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດຳເນີນກິດຈະການທີ່ມີການນຳໃຊ້ຄື້ນຄວາມຖີ່ ຄູ່ກໍລະນີ ມີສິດຮ້ອງຂໍໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ ຕາມລະບຽບກົດໝາຍ.

ມາດຕາ 58 ການຮ້ອງຟ້ອງຕໍ່ສານປະຊາຊົນ

ໃນກໍລະນີ ທີ່ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດຳເນີນກິດຈະການທີ່ມີການນຳໃຊ້ຄື້ນຄວາມຖີ່ ຄູ່ກໍລະນີ ຝ່າຍໃດຝ່າຍໜຶ່ງມີສິດຮ້ອງຟ້ອງ ຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

ມາດຕາ 59 ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ

ເມື່ອມີຂໍ້ຂັດແຍ່ງ ກ່ຽວກັບຄື້ນຄວາມຖີ່ ທີ່ມີລັກສະນະສາກົນ ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ VIII
## ການຄຸ້ມຄອງ ແລະ ກວດກາວຽກງານຄື້ນຄວາມຖີ່
### ໝວດທີ 1
### ການຄຸ້ມຄອງວຽກງານຄື້ນຄວາມຖີ່

ມາດຕາ 60 ອົງການຄຸ້ມຄອງຄື້ນຄວາມຖີ່

ລັດຖະບານຄຸ້ມຄອງຄື້ນຄວາມຖີ່ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຮັບຜິດຊອບໂດຍກົງ

ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ.

ອົງການຄຸ້ມຄອງຄື້ນຄວາມຖີ່ ປະກອບດ້ວຍ:

1. ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ, ນະຄອນ;
3. ຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານເມືອງ, ເທດສະບານ.

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ໃນການຄຸ້ມຄອງວຽກງານຄື້ນຄວາມຖີ່ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ, ສ້າງນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງຄື້ນຄວາມຖີ່ ເພື່ອສະເໜີຕໍ່ລັດຖະບານພິຈາລະນາຮັບຮອງ;
2. ໂຄສະນາເຜີຍແຜ່, ຊີ້ນຳ, ຕິດຕາມ ການຈັດຕັ້ງປະຕິບັດກົດໝາຍສະບັບນີ້, ລະບຽບການທີ່ກ່ຽວຂ້ອງ ໃຫ້ທົ່ວປວງຊົນ;
3. ຊີ້ນຳການຈັດຕັ້ງປະຕິບັດວຽກງານດ້ານຄື້ນຄວາມຖີ່ ຂອງພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ ໂດຍປະສານສົມທົບກັບຂະແໜງການອື່ນ ທີ່ກ່ຽວຂ້ອງ;
4. ຂຶ້ນທະບຽນການນຳໃຊ້ຄື້ນຄວາມຖີ່ ແລະ ວົງໂຄຈອນດາວທຽມ ຕາມລະບຽບການຂອງສະຫະພາບໂທລະຄົມມະນາຄົມສາກົນ;
5. ປົກປ້ອງສິດ, ຜົນປະໂຫຍດ ຂອງ ສປປ ລາວ ກ່ຽວກັບ ການນຳໃຊ້ຄື້ນຄວາມຖີ່ ແລະ ວົງໂຄຈອນດາວທຽມ;
6. ຄຸ້ມຄອງ, ບໍລິຫານ, ຈັດສັນ, ແບ່ງປັນ ແລະ ຮຽກເກັບຄືນຄື້ນຄວາມຖີ່;
7. ອະນຸຍາດ, ຕໍ່ອາຍຸ, ຍົກເລີກ ຫຼື ຖອນການນຳໃຊ້ຄື້ນຄວາມຖີ່;
8. ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເພື່ອຮ່ວມມືດ້ານຄື້ນຄວາມຖີ່ກັບປະເທດທີ່ມີຊາຍແດນຕິດກັບ ສປປ ລາວ;
9. ຄຸ້ມຄອງ, ຕິດຕາມ ການນຳໃຊ້ຄື້ນຄວາມຖີ່ ໃນຂອບເຂດທົ່ວປະເທດ;
10. ແກ້ໄຂຂໍ້ຂັດແຍ່ງ ທີ່ເກີດຈາກການນຳໃຊ້ຄື້ນຄວາມຖີ່;
11. ກ່າວເຕືອນ ແລະ ວາງມາດຕະການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້;
12. ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝກ່ຽວກັບການນຳໃຊ້ຄື້ນຄວາມຖີ່;
13. ກໍ່ສ້າງ, ບຳລຸງ ແລະ ຍົກລະດັບພະນັກງານວິຊາການດ້ານຄື້ນຄວາມຖີ່;

14. ພົວພັນ ແລະ ຮ່ວມມື ກັບສາກົນໃນວຽກງານຄື້ນຄວາມຖີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ແລະ ຕາມການມອບໝາຍ ຂອງລັດຖະບານ;
15. ສະຫຼຸບ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຄື້ນຄວາມຖີ່ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
16. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ.**

ໃນການຄຸ້ມຄອງວຽກງານຄື້ນຄວາມຖີ່ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ແຜນການ ແລະ ຂໍ້ຕົກລົງຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະການສື່ສານ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ;
2. ຊີ້ນຳຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ ກ່ຽວກັບວຽກງານຄື້ນຄວາມຖີ່;
3. ອະນຸຍາດ, ຕໍ່ອາຍຸ, ຍົກເລີກ ຫຼື ໂຈະການນຳໃຊ້ຄື້ນຄວາມຖີ່;
4. ຄຸ້ມຄອງ, ຕິດຕາມ ການນຳໃຊ້ຄື້ນຄວາມຖີ່;
5. ໂຄສະນາເຜີຍແຜ່ດຳລັດສະບັບນີ້ ຢູ່ພາຍໃນທ້ອງຖິ່ນຂອງຕົນ ໃຫ້ທົ່ວເຖິງ;
6. ແກ້ໄຂຂໍ້ຂັດແຍ່ງ ທີ່ເກີດຈາກການນຳໃຊ້ຄື້ນຄວາມຖີ່;
7. ກ່າວເຕືອນ ແລະ ວາງມາດຕະການ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້;
8. ເກັບກຳຂໍ້ມູນສະຖິຕິຜູ້ນຳໃຊ້ຄື້ນຄວາມຖີ່;
9. ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝກ່ຽວກັບການນຳໃຊ້ຄື້ນຄວາມຖີ່;
10. ສະຫຼຸບ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຄື້ນຄວາມຖີ່ຕໍ່ອົງການປົກຄອງແຂວງ, ນະຄອນ ແລະ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນປົກກະຕິ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 63 ສິດ ແລະ ໜ້າທີ່ຂອງ ຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານຄື້ນຄວາມຖີ່ ຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ດຳລັດສະບັບນີ້ ແລະ ລະບຽບກົດໝາຍກ່ຽວກັບການຄຸ້ມຄອງຄື້ນຄວາມຖີ່;
2. ປະສານສົມທົບກັບອົງການປົກຄອງເມືອງ, ເທດສະບານຕິດຕາມ ການນຳໃຊ້ຄື້ນຄວາມຖີ່ພາຍໃນເມືອງ, ເທດສະບານ ຂອງຕົນ;
3. ຕໍ່ອາຍຸການນຳໃຊ້ຄື້ນຄວາມຖີ່;
4. ເກັບກຳຂໍ້ມູນສະຖິຕິ ຂອງຜູ້ນຳໃຊ້ຄື້ນຄວາມຖີ່;
5. ໂຄສະນາເຜີຍແຜ່ດຳລັດສະບັບນີ້ ແລະ ລະບຽບກົດໝາຍກ່ຽວກັບການຄຸ້ມຄອງຄື້ນຄວາມຖີ່ຢູ່ພາຍໃນທ້ອງຖິ່ນຂອງຕົນ ໃຫ້ທົ່ວເຖິງ;
6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ອົງການປົກຄອງເມືອງ, ເທດສະບານ, ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ ຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ການກວດກາວຽກງານຄື້ນຄວາມຖີ່

**ມາດຕາ 64 ອົງການກວດກາວຽກງານຄື້ນຄວາມຖີ່**

ອົງການກວດກາວຽກງານຄື້ນຄວາມຖີ່ ປະກອບດ້ວຍ:

1. ອົງການກວດກາພາຍໃນ;
2. ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງຄື້ນຄວາມຖີ່ ຕາມທີ່ໄດ້ ກຳນົດໄວ້ໃນ ມາດຕາ 60 ຂອງດຳລັດສະບັບນີ້.

ອົງການກວດກາພາຍນອກ ແມ່ນສະພາແຫ່ງຊາດ ແລະ ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ.

**ມາດຕາ 65 ເນື້ອໃນການກວດກາ**

ການກວດກາວຽກງານຄື້ນຄວາມຖີ່ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງຄື້ນຄວາມຖີ່;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງວຽກງານຄື້ນຄວາມຖີ່;
3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກກ່ຽວກັບການຄຸ້ມຄອງຄື້ນຄວາມຖີ່.

**ມາດຕາ 66 ຮູບການກວດກາ**

ການກວດກາການນຳໃຊ້ຄື້ນຄວາມຖີ່ ມີສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມປົກກະຕິ ແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ທີ່ຈະຖືກກວດກາຮູ້ກ່ອນ ຢ່າງໜ້ອຍຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາ ເມື່ອເຫັນວ່າມີຄວາມຈຳເປັນ, ຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບ.

ການກວດກາ ໃຫ້ດຳເນີນທັງການກວດກາເອກະສານ ແລະ ກວດກາການຈັດຕັ້ງປະຕິບັດຕົວຈິງກ່ຽວກັບວຽກງານຄື້ນຄວາມຖີ່ ແລະ ໃຫ້ປະຕິບັດຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 67 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດດຳລັດສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ນຳໃຊ້ຄື້ນຄວາມຖີ່ຖືກຕ້ອງຕາມຈຸດປະສົງເປົ້າໝາຍ, ມີປະສິດທະພາບ ແລະ ປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ແລະ ໄດ້ຮັບນະໂຍບາຍຕາມລະບຽບກົດໝາຍ.

**ມາດຕາ 68 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ ລວມທັງໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

**ມາດຕາ 69 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຄັ້ງທຳອິດ ທີ່ບໍ່ເປັນອັນຕະລາຍ ຫຼື ຮ້າຍແຮງໂດຍບໍ່ເຈດຕະນາ ແລະ ກໍ່ຄວາມເສັຍຫາຍທີ່ມີມູນຄ່າຕ່ຳຈະຖືກກ່າວເຕືອນພ້ອມທັງບັນທຶກໄວ້ໃນສຳນວນເອກະສານ ຊີວະປະຫວັດຂອງຜູ້ກ່ຽວ ແລະ ສຶກສາອົບຮົມ.

### ມາດຕາ 70 ມາດຕະການທາງວິໄນ

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ລະເມີດດຳລັດສະບັບນີ້ ແລະ ຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍທີ່ມີມູນຄ່າຕ່ຳ ແຕ່ບໍ່ຈິງໃຈລາຍງານ ຈະຖືກລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ;
2. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກ່ວາ;
3. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນ ທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງ ຢ່າງຄົບຖ້ວນ.

### ມາດຕາ 71 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປັບໃໝ ໃນກໍລະນີ ດັ່ງນີ້:

1. ນຳໃຊ້ດິນຄວາມຖີ່ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ຄື້ນຄວາມຖີ່ ເກີນຂອບເຂດທີ່ໄດ້ຮັບອະນຸຍາດ;
3. ນຳໃຊ້ຄື້ນຄວາມຖີ່ ບໍ່ຖືກຕາມເປົ້າໝາຍ;
4. ໂອນ, ຂາຍ ແລະ ໃຫ້ເຊົ່າ ສິດນຳໃຊ້ຄື້ນຄວາມຖີ່ ໂດຍບໍ່ໄດ້ຮັບອະນຸຍາດ;
5. ລະເມີດບົດບັນຍັດໃດໜຶ່ງ ຂອງດຳລັດສະບັບນີ້;
6. ບໍ່ເສຍຄ່ານຳໃຊ້ຄື້ນຄວາມຖີ່ ຕາມເວລາທີ່ກຳນົດໄວ້ໃນໃບແຈ້ງຊຳລະເງິນປະຈຳປີ;

ສຳລັບອັດຕາການປັບໃໝ ໃນແຕ່ລະກໍລະນີ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 72 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ລັດ, ລວມໝູ່ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 73 ມາດຕະການທາງອາຍາ

ບຸກຄົນ ທີ່ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ລວມທັງໃຫ້ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 74 ມາດຕະການໂທດເພີ່ມ

ນອກຈາກໂທດຕົ້ນຕໍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 68 ຫາ 73 ຂອງດຳລັດສະບັບນີ້ ຜູ້ກະທຳຜິດ ຈະຖືກປະຕິບັດມາດຕະການໂທດເພີ່ມ ຕາມແຕ່ລະກໍລະນີ ເຊັ່ນ ການໂຈະ, ການຖອນໃບອະນຸຍາດ ຫຼື ຍຸບເລີກກິດຈະການ, ການຮິບຊັບ, ພາຫະນະ ແລະ ອຸປະກອນ ທີ່ນຳໃຊ້ເຂົ້າໃນການກະທຳຜິດນັ້ນ ເປັນຂອງລັດຕາມກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 75 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ໃຫ້ມີປະສິດຕິຜົນ.

ບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 76 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ສາມສິບວັນ ນັບແຕ່ວັນ ລົງລາຍເຊັນ ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນຂໍ້ກຳນົດຂອງສະພາລັດຖະມົນຕີວ່າດ້ວຍລະບຽບການຄຸ້ມຄອງພາຫະນະ ແລະ ຄື້ນວິທະຍຸຕິດຕໍ່ສື່ສານ, ກະຈາຍສຽງ-ໂທລະພາບ (ລະບົບຕິດຕໍ່ສະເພາະ) ສະບັບເລກທີ 41/ຢສລ ລົງວັນທີ 13 ສິງຫາ 1990.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ